ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 701 /ນຍ
ນະຄອນຫຼວງວຽງຈັນ, ວັນທີ 17 / 12 / 24

# ດຳລັດ
# ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ
# ຂອງຄະນະກຳມະການແກ້ໄຂບັນຫາຢາເສບຕິດ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ (ສະບັບປັບປຸງ) ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍຢາເສບຕິດ ສະບັບເລກທີ 10/ສພຊ, ລົງວັນທີ 25 ທັນວາ 2007 ແລະ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍຢາເສບຕິດ ສະບັບເລກທີ 02/ສພຊ, ລົງວັນທີ 09 ສິງຫາ 2021;
- ອີງຕາມ ໜັງສືສະເໜີ ຂອງກະຊວງປ້ອງກັນຄວາມສະຫງົບ ສະບັບເລກທີ 436/ປກສ, ລົງວັນທີ 05 ທັນວາ 2024.

**ນາຍົກລັດຖະມົນຕີ ອອກດຳລັດ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະກຳມະການແກ້ໄຂບັນຫາຢາເສບຕິດ ໃນການກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ໃນຂອບເຂດທົ່ວປະເທດ ໃຫ້ເປັນລະບົບ, ຖືກຕ້ອງ, ມີປະສິດທິພາບ ແລະ ມີປະສິດທິຜົນ ແນໃສ່ປົກປ້ອງສິດ, ຜົນປະໂຫຍດ, ຊີວິດ, ສຸຂະພາບ, ກຽດສັກສີ, ເສລີພາບ ຂອງພົນລະເມືອງ ແລະ ຮີດຄອງປະເພນີອັນດີງາມຂອງຊາດ, ເຮັດໃຫ້ສັງຄົມ ປອດຈາກຢາເສບຕິດ, ມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ ປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

**ມາດຕາ 2 ຄະນະກຳມະການແກ້ໄຂບັນຫາຢາເສບຕິດ**

ຄະນະກຳມະການແກ້ໄຂບັນຫາຢາເສບຕິດ ປະກອບດ້ວຍ:

1. ຄະນະກຳມະການແກ້ໄຂບັນຫາຢາເສບຕິດ ລະດັບຊາດ;
2. ຄະນະກຳມະການແກ້ໄຂບັນຫາຢາເສບຕິດ ແຂວງ, ນະຄອນຫຼວງ;
3. ຄະນະກຳມະການແກ້ໄຂບັນຫາຢາເສບຕິດ ເມືອງ, ເທດສະບານ, ນະຄອນ.

**ມາດຕາ 3 ທີ່ຕັ້ງ ແລະ ພາລະບົດບາດ**

ຄະນະກຳມະການແກ້ໄຂບັນຫາຢາເສບຕິດ ມີ ທີ່ຕັ້ງ ແລະ ພາລະບົດບາດ ດັ່ງນີ້:

**1. ຄະນະກຳມະການແກ້ໄຂບັນຫາຢາເສບຕິດ ລະດັບຊາດ**

ຄະນະກຳມະການແກ້ໄຂບັນຫາຢາເສບຕິດ ລະດັບຊາດ ຂຽນເປັນຕົວອັກສອນຫຍໍ້ວ່າ: (ຄກສຊ) ຊຶ່ງແມ່ນການຈັດຕັ້ງໜຶ່ງ ທີ່ບໍ່ປະຈຳການ, ມີພາລະບົດບາດເປັນເສນາທິການ ໃຫ້ແກ່ລັດຖະບານ ໃນການ ຊີ້ນຳ, ຕິດຕາມ, ກວດກາ, ຊຸກຍູ້, ປະສານສົມທົບກັບບັນດາກະຊວງ, ອົງການ ແລະ ພາກສ່ວນກ່ຽວຂ້ອງ ໃນການຄົ້ນຄວ້າສ້າງ, ປັບປຸງ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ກຳນົດທິດທາງແຜນການຈັດຕັ້ງປະຕິບັດວຽກງານການແກ້ໄຂບັນຫາຢາເສບຕິດ, ໂຄງການກ່ຽວກັບວຽກງານກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ໃນຂອບເຂດທົ່ວປະເທດ ທັງເປັນໃຈກາງໃນການປະສານສົມທົບກັບພາກສ່ວນກ່ຽວຂ້ອງທັງພາຍໃນ ແລະ ຕ່າງປະເທດ ເພື່ອໂຄສະນາ, ປຸກລະດົມ, ຂົນຂວາຍ, ລະດົມທຶນຮອນ, ວັດຖຸປະກອນ ແລະ ເຕັກນິກວິຊາການເຂົ້າໃນວຽກງານແກ້ໄຂບັນຫາຢາເສບຕິດ ຂອງ ສປປ ລາວ.

**2. ຄະນະກຳມະການແກ້ໄຂບັນຫາຢາເສບຕິດ ແຂວງ, ນະຄອນຫຼວງ**

ຄະນະກຳມະການແກ້ໄຂບັນຫາຢາເສບຕິດ ແຂວງ, ນະຄອນຫຼວງ ຂຽນເປັນຕົວອັກສອນຫຍໍ້ວ່າ: (ຄກສ.ຂ), (ຄກສ.ນວ) ແມ່ນການຈັດຕັ້ງໜຶ່ງ ທີ່ບໍ່ປະຈຳການ ມີພາລະບົດບາດເປັນເສນາທິການ ໃຫ້ແກ່ຄະນະກຳມະການແກ້ໄຂບັນຫາຢາເສບຕິດ ລະດັບຊາດ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ໃນການຈັດຕັ້ງຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແຜນການ, ແຜນງານ, ໂຄງການ ແລະ ກິດຈະກຳກ່ຽວກັບວຽກງານກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ທັງເປັນໃຈກາງໃນການປະສານສົມທົບກັບຂະແໜງການ ແລະ ພາກສ່ວນກ່ຽວຂ້ອງ ເພື່ອໂຄສະນາ, ປຸກລະດົມ, ຂົນຂວາຍ, ລະດົມທຶນຮອນ, ວັດຖຸປະກອນ ແລະ ເຕັກນິກວິຊາການເຂົ້າໃນວຽກງານແກ້ໄຂບັນຫາຢາເສບຕິດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

**3. ຄະນະກຳມະການແກ້ໄຂບັນຫາຢາເສບຕິດ ເມືອງ, ເທດສະບານ, ນະຄອນ**

ຄະນະກຳມະການແກ້ໄຂບັນຫາຢາເສບຕິດ ເມືອງ, ເທດສະບານ, ນະຄອນ ຂຽນເປັນຕົວອັກສອນຫຍໍ້ວ່າ: (ຄກສ.ມ), (ຄກສ.ທ), (ຄກສ.ນ) ແມ່ນການຈັດຕັ້ງໜຶ່ງ ທີ່ບໍ່ປະຈຳການ ມີພາລະບົດບາດເປັນເສນາທິການ ໃຫ້ແກ່ຄະນະກຳມະການແກ້ໄຂບັນຫາຢາເສບຕິດ ແຂວງ, ນະຄອນຫຼວງ, ເຈົ້າເມືອງ, ຫົວໜ້າເທດສະບານເຈົ້ານະຄອນ ໃນການຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ແຜນການ, ແຜນງານ, ໂຄງການ ແລະ ກິດຈະກຳກ່ຽວກັບວຽກງານກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ທັງເປັນໃຈກາງໃນການປະສານສົມທົບກັບຂະແໜງການ ແລະ ພາກສ່ວນກ່ຽວຂ້ອງ ເພື່ອໂຄສະນາ, ປຸກລະດົມ, ຂົນຂວາຍ, ລະດົມທຶນຮອນ, ວັດຖຸປະກອນ ແລະ ເຕັກນິກວິຊາການເຂົ້າໃນວຽກງານແກ້ໄຂບັນຫາຢາເສບຕິດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 4 ໜ້າທີ່ ຂອງຄະນະກຳມະການແກ້ໄຂບັນຫາຢາເສບຕິດ**

**1. ຄະນະກຳມະການແກ້ໄຂບັນຫາຢາເສບຕິດ ລະດັບຊາດ ມີ ໜ້າທີ່ ດັ່ງນີ້:**

1.1 ປະຕິບັດຕາມແນວທາງນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການກ່ຽວກັບວຽກງານ ກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ຢ່າງເຂັ້ມງວດ;

1.2 ຄົ້ນຄວ້າສ້າງ ແລະ ປັບປຸງ ແຜນຍຸດທະສາດ, ນິຕິກຳ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕັດ ເພື່ອນຳສະເໜີລັດຖະບານ ພິຈາລະນາ;

1.3 ຄົ້ນຄວ້າ ສົນທິສັນຍາ, ສັນຍາສາກົນ ແລະ ເອກະສານອື່ນ ຂອງສາກົນ ກ່ຽວກັບວຽກງານກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ເພື່ອນຳສະເໜີລັດຖະບານ ພິຈາລະນາ ເປັນຕົ້ນ ການເຂົ້າຮ່ວມ, ຮັບຮອງ, ຈັດຕັ້ງປະຕິບັດ ແລະ ຍົກເລີກ;

1.4 ຊອກຮູ້, ເກັບກຳ ບັນດາສາເຫດ, ເລ່ຫຼ່ຽມການເຄື່ອນໄຫວ, ກົນອຸບາຍ ແລະ ເງື່ອນໄຂຕ່າງໆ ຢູ່ພາຍໃນ ແລະ ຕ່າງປະເທດ ທີ່ພາໃຫ້ເກີດການລັກລອບຄ້າຂາຍ, ການລຳລຽງຂົນສົ່ງ, ການສະໜອງ, ການປູກ, ການຜະລິດ ແລະ ການຊົມໃຊ້ສິ່ງເສບຕິດປະເພດຕ່າງໆ;

1.5 ເປັນເຈົ້າການປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອນຳພາ ຊີ້ນຳ ຄຸ້ມຄອງ, ຕິດຕາມ, ກວດກາ, ຊຸກຍູ້ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ກ່ຽວກັບວຽກງານກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ເປັນຕົ້ນ ບັນດາໂຄງການລົງທຶນຂອງລັດ, ທຶນຊ່ວຍເຫຼືອລ້າຈາກຕ່າງປະເທດ, ອົງການຈັດຕັ້ງສາກົນ ໃນຂົງເຂດວຽກງານສຳຫຼວດ, ທຳລາຍເນື້ອທີ່ລັກລອບປູກພືດທີ່ມີສານເສບຕິດ, ວຽກງານໂຄງການພັດ ທະນາທາງເລືອກທົດແທນການປູກພືດທີ່ມີສານເສບຕິດ, ວຽກງານສູນບຳບັດປິ່ນປົວ ແລະ ຝຶກວິຊາຊີບຜູ້ຕິດຢາເສບຕິດ, ວຽກງານສູນວິໄຈຢາເສບຕິດ, ວຽກງານການຄຸ້ມຄອງການນຳເຂົ້າ, ນຳຜ່ານ, ເກັບມ້ຽນ ສານເຄມີຕົ້ນ ວຽກງານສ້າງໂຮງຮຽນ, ສ້າງບ້ານ, ສຳນັກງານ-ອົງການ ແລະ ສະຖານທີ່ປອດຈາກຢາເສບຕິດ;

1.6 ຕິດຕາມ, ກວດກາ, ຄຸ້ມຄອງ, ຊຸກຍູ້ ແລະ ປະເມີນຜົນ ການເຄື່ອນໄຫວຂອງຫ້ອງການປະສານງານ ຕາມຊາຍແດນ (BLOs), ສູນປະສານງານປະຕິບັດກົດ ໝາຍແມ່ນ້ຳຂອງແມ່ນ້ຳລ້ານຊ້າງ (LMLECC), ສູນປະສານງານແມ່ນ້ຳຂອງປອດໄພ (SMCC), ບ້ານຄູ່ຂະໜານປອດຢາເສບຕິດ ແລະ ໂຄງການອື່ນໆ ທີ່ຕິດພັນກັບການແກ້ໄຂບັນຫາຢາເສບຕິດ;

1.7 ຕິດຕາມ ກວດກາ ການນຳໃຊ້ກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

1.8 ໂຄສະນາ, ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ວາລະແຫ່ງຊາດ, ແຜນການ, ແຜນງານ ແລະ ໂຄງການ, ສ້າງຂະບວນການດ້ອຍຫຼາຍຮູບການ ເປັນຕົ້ນ ສະໜອງຂໍ້ມູນ-ຂ່າວສານ, ຜະລິດສື່ໂຄສະນາ, ຈັດພິທີສະເຫຼີມສະຫຼອງເນື່ອງໃນວັນສາກົນ, ວັນແຫ່ງຊາດຕ້ານຢາເສບຕິດ ແລະ ກິດຈະກຳຕ່າງໆ ທີ່ກ່ຽວຂ້ອງກັບວຽກງານກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ໃຫ້ພົນລະເມືອງ ແລະ ທຸກພາກສ່ວນໃນທົ່ວສັງຄົມ ໄດ້ຮັບຮູ້, ເຂົ້າໃຈ ແລະ ໃຫ້ການຮ່ວມມື ໃນການຈັດຕັ້ງປະຕິບັດຢ່າງກວ້າງຂວາງ;

1.9 ສ້າງລະບົບຖານຂໍ້ມູນ ເພື່ອນຳໃຊ້ເຂົ້າໃນວຽກງານວິຊາສະເພາະ ໃນການກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ເປັນຕົ້ນ ການສຶກສາ, ຄົ້ນຄວ້າ, ວາງນະໂຍບາຍ ແລະ ມາດຕະການແກ້ໄຂຢ່າງເໝາະສົມ;

1.10 ໃຫ້ການຊ່ວຍເຫຼືອຜູ້ຕິດຢາເສບຕິດ ໄດ້ຮັບການບຳບັດ, ປິ່ນປົວ, ຟື້ນຟູສຸຂະພາບທາງດ້ານຮ່າງກາຍ, ຈິດໃຈ ແລະ ຝຶກວິຊາຊີບ ຂັ້ນພື້ນຖານ ເພື່ອໃຫ້ເຂົາເຈົ້າກັບຄືນເປັນຄົນດີ ສູ່ຄອບຄົວ ແລະ ສັງຄົມ;

1.11 ຈັດ ແລະ ເຂົ້າຮ່ວມກອງປະຊຸມ, ສຳມະນາ, ຝຶກອົບຮົມ ກ່ຽວກັບວຽກງານກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ຢູ່ພາຍໃນ ແລະ ຕ່າງປະເທດ ຕາມການຕົກລົງເຫັນດີຂອງຂັ້ນເທິງ;

1.12 ພົວພັນ, ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ຕາມການຕົກລົງເຫັນດີຂອງຂັ້ນເທິງ;

1.13 ຄົ້ນຄວ້າປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ ຕາມກົດໝາຍ ແລະ ລະບຽບການ;

1.14 ສະຫຼຸບລາຍງານ ກ່ຽວກັບການຈັດຕັ້ງປະຕິບັດວຽກງານກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ໃຫ້ແກ່ລັດຖະບານ ໃນແຕ່ລະໄລຍະ;

1.15 ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນ ກົດໝາຍ, ລະບຽບການ ແລະ ຕາມການມອບໝາຍຂອງລັດຖະບານ.

**2. ຄະນະກຳມະການແກ້ໄຂບັນຫາຢາເສບຕິດ ແຂວງ, ນະຄອນຫຼວງ ມີໜ້າທີ່ ດັ່ງນີ້:**

2.1 ຜັນຂະຫຍາຍ ແຜນຍຸດທະສາດ, ວາລະແຫ່ງຊາດ, ນິຕິກຳ, ແຜນການ, ແຜນງານ, ໂຄງການ ຂອງຄະນະກຳມະການແກ້ໄຂບັນຫາຢາເສບຕິດ ລະດັບຊາດ ວາງອອກ ເພື່ອຫັນເປັນ ນິຕິກຳ, ແຜນການ, ແຜນງານ, ໂຄງການອັນລະອຽດຂອງຕົນ ພ້ອມທັງຈັດຕັ້ງປະຕິບັດ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ;

2.2 ຈັດຕັ້ງປະຕິບັດ ຕາມສົນທິສັນຍາ, ສັນຍາສາກົນ ກ່ຽວກັບວຽກງານກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ທີ່ ສປປ ລາວ ເຂົ້າຮ່ວມເປັນພາຄີ;

2.3 ຊອກຮູ້, ເກັບກຳ ບັນດາສາເຫດ, ເລ່ຫຼ່ຽມການເຄື່ອນໄຫວ, ກົນອຸບາຍ ແລະ ເງື່ອນໄຂຕ່າງໆ ຢູ່ພາຍໃນ ແລະ ຕ່າງປະເທດ ທີ່ພາໃຫ້ເກີດການລັກລອບຄ້າຂາຍ, ການລຳລຽງຂົນສົ່ງ, ການສະໜອງ, ການປູກ, ການຜະລິດ ແລະ ການຊົມໃຊ້ສິ່ງເສບຕິດປະເພດຕ່າງໆ;

2.4 ເປັນເຈົ້າການປະສານສົມທົບກັບພະແນກການ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຊີ້ນຳ, ຄຸ້ມຄອງ, ຕິດຕາມ, ກວດກາ, ຊຸກຍູ້ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ກ່ຽວກັບວຽກງານກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ເປັນຕົ້ນ ບັນດາໂຄງການລົງທຶນຂອງລັດ, ທຶນຊ່ວຍເຫຼືອລ້າຈາກຕ່າງປະເທດ, ອົງການ ຈັດຕັ້ງສາກົນ ໃນຂົງເຂດວຽກງານສຳຫຼວດ, ທຳລາຍເນື້ອທີ່ລັກລອບປູກພືດທີ່ມີສານເສບຕິດ, ວຽກງານໂຄງການພັດທະນາທາງເລືອກທົດແທນການປູກພືດທີ່ມີສານເສບຕິດ, ວຽກງານສູນບຳບັດປິ່ນປົວ ແລະ ຝຶກວິຊາຊີບຜູ້ຕິດຢາເສບຕິດ, ວຽກງານສູນວິໄຈຢາເສບຕິດ, ວຽກງານການຄຸ້ມຄອງການນຳເຂົ້າ, ນຳຜ່ານ, ເກັບມ້ຽນ ສານເຄມີຕົ້ນ ວຽກງານສ້າງໂຮງຮຽນ, ສ້າງບ້ານ, ສຳນັກງານ-ອົງການ ແລະ ສະຖານທີ່ປອດຈາກຢາເສບຕິດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

2.5 ຕິດຕາມ, ກວດກາ, ຄຸ້ມຄອງ, ຊຸກຍູ້ ແລະ ປະເມີນຜົນ ການເຄື່ອນໄຫວຂອງຫ້ອງການປະສານງານ ຕາມຊາຍແດນ (BLOs ), ບ້ານຄູ່ຂະໜານປອດຢາເສບຕິດ ແລະ ໂຄງການອື່ນໆ ທີ່ຕິດພັນກັບການແກ້ໄຂບັນຫາຢາເສບຕິດ;

2.6 ຕິດຕາມ, ກວດກາ ການນຳໃຊ້ກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ຂັ້ນແຂວງ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

2.7 ໂຄສະນາ, ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ວາລະແຫ່ງຊາດ, ແຜນການ, ແຜນງານ ແລະ ໂຄງການ, ສ້າງຂະບວນການດ້ອຍຫຼາຍຮູບການ ເປັນຕົ້ນ ສະໜອງຂໍ້ມູນ-ຂ່າວສານ, ຜະລິດສື່ໂຄສະນາ, ຈັດພິທີສະເຫຼີມສະຫຼອງເນື່ອງໃນວັນສາກົນ, ວັນແຫ່ງຊາດຕ້ານຢາເສບຕິດ ແລະ ກິດຈະກຳຕ່າງໆ ທີ່ກ່ຽວຂ້ອງກັບວຽກງານກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ໃຫ້ພົນລະເມືອງ ແລະ ທຸກພາກສ່ວນໃນທົ່ວແຂວງ ໄດ້ຮັບຮູ້, ເຂົ້າໃຈ ແລະ ໃຫ້ການຮ່ວມມື ໃນການຈັດຕັ້ງປະຕິບັດຢ່າງກວ້າງຂວາງ;

2.8 ຄຸ້ມຄອງ ແລະ ນຳໃຊ້ລະບົບຖານຂໍ້ມູນ ເຂົ້າໃນວຽກງານວິຊາສະເພາະ ໃນການກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ເປັນຕົ້ນ ການສຶກສາ, ຄົ້ນຄວ້າ, ວາງນະໂຍບາຍ ແລະ ມາດຕະການແກ້ໄຂຢ່າງເໝາະສົມ;

2.9 ໃຫ້ການຊ່ວຍເຫຼືອຜູ້ຕິດຢາເສບຕິດ ໄດ້ຮັບການບຳບັດ, ປິ່ນປົວ, ຟື້ນຟູສຸຂະພາບທາງດ້ານຮ່າງກາຍ, ຈິດໃຈ ແລະ ຝຶກວິຊາຊີບ ຂັ້ນພື້ນຖານ ເພື່ອໃຫ້ເຂົາເຈົ້າກັບຄືນເປັນຄົນດີ ສູ່ຄອບຄົວ ແລະ ສັງຄົມ;

2.10 ຈັດ ແລະ ເຂົ້າຮ່ວມກອງປະຊຸມ, ສຳມະນາ, ຝຶກອົບຮົມ ກ່ຽວກັບວຽກງານກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ຢູ່ພາຍໃນ ແລະ ຕ່າງປະເທດ ຕາມການຕົກລົງເຫັນດີຂອງຂັ້ນເທິງ;

2.11 ພົວພັນ, ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ຕາມການ ຕົກລົງເຫັນດີຂອງຂັ້ນເທິງ;

2.12 ຄົ້ນຄວ້າປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ ຕາມກົດໝາຍ ແລະ ລະບຽບການ;

2.13 ສະຫຼຸບລາຍງານ ກ່ຽວກັບການຈັດຕັ້ງປະຕິບັດວຽກງານກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ໃຫ້ແກ່ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ແລະ ຄະນະກຳມະການແກ້ໄຂບັນຫາຢາເສບຕິດ ລະດັບຊາດ ໃນແຕ່ລະໄລຍະ;

2.14 ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນ ກົດໝາຍ, ລະບຽບການ ແລະ ຕາມການມອບໝາຍຂອງຂັ້ນເທິງ.

**3. ຄະນະກຳມະການແກ້ໄຂບັນຫາຢາເສບຕິດ ເມືອງ, ເທດສະບານ, ນະຄອນ ມີໜ້າທີ່ ດັ່ງນີ້:**

3.1 ຈັດຕັ້ງປະຕິບັດ ແຜນຍຸດທະສາດ, ວາລະແຫ່ງຊາດ, ນິຕິກຳ, ແຜນການ, ແຜນງານ, ໂຄງການ ຂອງຄະນະກຳມະການແກ້ໄຂບັນຫາຢາເສບຕິດ ລະດັບຊາດ ແລະ ແຂວງ, ນະຄອນຫຼວງ ວາງອອກ ເພື່ອຫັນເປັນ ນິຕິກຳ, ແຜນການ, ແຜນງານ, ໂຄງການອັນລະອຽດຂອງຕົນ ພ້ອມທັງຈັດຕັ້ງປະຕິບັດ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ;

3.2 ຊອກຮູ້, ເກັບກຳ ບັນດາສາເຫດ, ເລ່ຫຼ່ຽມການເຄື່ອນໄຫວ, ກົນອຸບາຍ ແລະ ເງື່ອນໄຂຕ່າງໆ ຢູ່ພາຍໃນ ແລະ ຕ່າງປະເທດ ທີ່ພາໃຫ້ເກີດການລັກລອບຄ້າຂາຍ, ການລຳລຽງຂົນສົ່ງ, ການສະໜອງ, ການປູກ, ການຜະລິດ ແລະ ການຊົມໃຊ້ສິ່ງເສບຕິດປະເພດຕ່າງໆ;

3.3 ເປັນເຈົ້າການປະສານສົມທົບກັບຫ້ອງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດ, ຕິດຕາມ, ກວດກາ ແລະ ປະເມີນຜົນ ກ່ຽວກັບວຽກງານກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ເປັນຕົ້ນ ໃນຂົງເຂດວຽກງານສຳຫຼວດ, ທຳລາຍເນື້ອທີ່ລັກລອບປູກພືດທີ່ມີສານເສບຕິດ, ວຽກງານໂຄງການພັດທະນາທາງເລືອກທົດແທນການປູກພືດທີ່ມີສານເສບຕິດ, ວຽກງານໃຫ້ຄຳປຶກສາຜູ້ຕິດຢາເສບຕິດຂັ້ນຊຸມຊົນ ວຽກງານສ້າງໂຮງຮຽນ, ສ້າງບ້ານ, ສຳນັກງານ-ອົງການ ແລະ ສະຖານທີ່ປອດຈາກຢາເສບຕິດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

3.4 ຕິດຕາມ, ກວດກາ, ຄຸ້ມຄອງ, ຊຸກຍູ້ ແລະ ປະເມີນຜົນ ການເຄື່ອນໄຫວຂອງຫ້ອງການປະສານງານ ຕາມຊາຍແດນ (BLOs), ບ້ານຄູ່ຂະໜານປອດຢາເສບຕິດ ແລະ ໂຄງການອື່ນໆ ທີ່ຕິດພັນກັບການແກ້ໄຂບັນຫາຢາເສບຕິດ ຕາມການມອບໝາຍຂອງຂັ້ນເທິງ;

3.5 ໂຄສະນາ, ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ວາລະແຫ່ງຊາດ, ແຜນການ, ແຜນງານ ແລະ ໂຄງການ, ສ້າງຂະບວນການດ້ວຍຫຼາຍຮູບການ ເປັນຕົ້ນ ສະໜອງຂໍ້ມູນ-ຂ່າວສານ, ຜະລິດສື່ໂຄສະນາ, ແລະ ກິດຈະກຳຕ່າງໆ ທີ່ກ່ຽວຂ້ອງກັບວຽກງານກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ໃຫ້ພົນລະເມືອງ ແລະ ທຸກພາກສ່ວນໃນທົ່ວເມືອງ ໄດ້ຮັບຮູ້, ເຂົ້າໃຈ ແລະ ໃຫ້ການຮ່ວມມື ໃນການຈັດຕັ້ງປະຕິບັດຢ່າງກວ້າງຂວາງ;

3.6 ຄຸ້ມຄອງ ແລະ ນຳໃຊ້ລະບົບຖານຂໍ້ມູນ ເຂົ້າໃນວຽກງານວິຊາສະເພາະ ໃນການກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ເປັນຕົ້ນ ການສຶກສາ, ຄົ້ນຄວ້າ ວາງ ແຜນການ, ແຜນງານ ແລະ ມາດຕະການແກ້ໄຂ ຢ່າງເໝາະສົມ;

3.7 ໃຫ້ຄຳປຶກສາຜູ້ຕິດຢາເສບຕິດ ຂັ້ນຊຸມຊົນ ເພື່ອໃຫ້ເຂົາເຈົ້າເປັນຄົນດີຂອງສັງຄົມ;

3.8 ຈັດ ແລະ ເຂົ້າຮ່ວມກອງປະຊຸມ, ສຳມະນາ, ຝຶກອົບຮົມ ກ່ຽວກັບວຽກງານກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ຕາມການຕົກລົງເຫັນດີຂອງຂັ້ນເທິງ;

3.9 ຄົ້ນຄວ້າປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ ຕາມກົດໝາຍ ແລະ ລະບຽບການ;

3.10 ສະຫຼຸບລາຍງານ ກ່ຽວກັບການຈັດຕັ້ງປະຕິບັດວຽກງານກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ໃຫ້ແກ່ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ແລະ ຄະນະກຳມະການແກ້ໄຂບັນຫາຢາເສບຕິດ ແຂວງ, ນະຄອນຫຼວງ ໃນແຕ່ລະໄລຍະ;

3.11 ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນ ກົດໝາຍ, ລະບຽບການ ແລະ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 5 ຂອບເຂດສິດ ຂອງຄະນະກຳມະການແກ້ໄຂບັນຫາຢາເສບຕິດ**

**1. ຄະນະກຳມະການແກ້ໄຂບັນຫາຢາເສບຕິດ ລະດັບຊາດ ມີຂອບເຂດສິດ ດັ່ງນີ້:**

1.1 ອອກຂໍ້ຕົກລົງ, ຄຳແນະນຳ, ແຈ້ງການ ແລະ ລະບຽບການ ທີ່ກ່ຽວຂ້ອງກັບວຽກງານກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ;

1.2 ຊີ້ນຳ, ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດວຽກງານ ຂອງຄະນະກຳມະການແກ້ໄຂບັນຫາຢາເສບຕິດ ແຂວງ, ນະຄອນຫຼວງ, ເມືອງ, ເທດສະບານ ແລະ ນະຄອນ ໃນຂອບເຂດທົ່ວປະເທດ;

1.3 ແຕ່ງຕັ້ງກອງເລຂາຄະນະກຳມະການແກ້ໄຂບັນຫາຢາເສບຕິດ ລະດັບຊາດ;

1.4 ຮຽກເຊີນພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມກອງປະຊຸມ ເພື່ອປຶກສາ ແລະ ຄົ້ນຄວ້າແກ້ໄຂບັນຫາກ່ຽວກັບ ວຽກງານກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ;

1.5 ຈັດກອງປະຊຸມສະໄໝສາມັນ, ວິສາມັນ, ສະຫຼຸບ ແລະ ຖອດຖອນບົດຮຽນກ່ຽວກັບວຽກງານກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ;

1.6 ທວງໃຫ້ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການຈັດຕັ້ງມະຫາຊົນ, ສູນກາງແນວລາວສ້າງຊາດ ແລະ ສະຫະພັນນັກຮົບເກົ່າລາວ ລາຍງານ ແລະ ສະໜອງຂໍ້ມູນ-ຂ່າວສານ ທີ່ກ່ຽວຂ້ອງກັບວຽກງານກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ;

1.7 ໂຄສະນາ, ສຶກສາອົບຮົມ ແລະ ເຜີຍແຜ່ເອກະສານຕ່າງໆ ທີ່ພົວພັນເຖິງວຽກງານກວດກາ, ຄວບຄຸມ, ສະກັດກັ້ນ, ຕ້ານຢາເສບຕິດ ແລະ ສານເຄມີຕົ້ນ ລວມທັງຈັດກິດຈະກຳວັນສາກົນ, ວັນແຫ່ງຊາດຕ້ານຢາເສບຕິດ ແລະ ກິດຈະກຳອື່ນ;

1.8 ຈັດຕັ້ງ ແລະ ເຂົ້າຮ່ວມ ກອງປະຊຸມ, ສຳມະນາ, ຝຶກອົບຮົມ, ທັດສະນະສຶກສາ ແລະ ເຂົ້າຮ່ວມເປັນຄະນະກຳມະການຕ່າງໆ ທີ່ພົວພັນເຖິງວຽກງານກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ເຊິ່ງອົງການຈັດຕັ້ງ ຫຼື ຂະແໜງການຕ່າງໆ ຈັດຂຶ້ນທັງພາຍໃນ ແລະ ຕ່າງປະເທດ;

1.9 ປະສານກັບພາກສ່ວນທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ເພື່ອເກັບກຳ, ວິໄຈຂໍ້ມູນ, ສ້າງ ແລະ ຄຸ້ມຄອງ ລະບົບຖານຂໍ້ມູນ-ຂ່າວສານດ້ານຕ່າງໆ ກ່ຽວກັບບັນຫາຢາເສບຕິດ ເພື່ອຮັບໃຊ້ໃຫ້ແກ່ການວາງແຜນ, ຕິດຕາມ, ກວດກາ ແລະ ປະເມີນຜົນເຂົ້າໃນວຽກງານກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ຢ່າງທັນການ;

1.10 ຄົ້ນຄວ້າ, ສ້າງ ຫ້ອງການປະສານງານຕາມຊາຍແດນ (BLOs), ສູນປະສານງານປະຕິບັດກົດໝາຍແມ່ນ້ຳຂອງ-ແມ່ນ້ຳລ້ານຊ້າງ (LMLECC), ສູນປະສານງານແມ່ນ້ຳຂອງປອດໄພ (SMCC), ບ້ານຄູ່ຂະໜານປອດຢາເສບຕິດ ແລະ ໂຄງການອື່ນ ທີ່ຕິດພັນກັບການແກ້ໄຂບັນຫາຢາເສບຕິດ;

1.11 ຄົ້ນຄວ້າ, ອອກຄຳແນະນຳ, ຊຸກຍູ້ ແລະ ນຳໃຊ້ກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

1.12 ຂຶ້ນແຜນງົບປະມານ, ຄຸ້ມຄອງ ແລະ ນຳໃຊ້ ງົບປະມານປະຈຳປີ, ທຶນຊ່ວຍເຫຼືອ, ພາຫະນະ, ອຸປະກອນຮັບໃຊ້ຕ່າງໆ ທີ່ຢູ່ໃນການຄຸ້ມຄອງເຂົ້າໃນວຽກງານກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ຢ່າງມີປະສິດທິຜົນ;

1.13 ພົວພັນ, ຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ເພື່ອແລກປ່ຽນບົດຮຽນ, ວິຊາການ ແລະ ລະດົມການຊ່ວຍເຫຼືອດ້ານທຶນຮອນ ເຂົ້າໃນວຽກງານກວດກາ, ຄວບຄຸມ, ສະກັດກັ້ນ, ແລະ ຕ້ານຢາເສບຕິດ;

1.14 ນຳໃຊ້ສິດອື່ນ ຕາມທີ່ກຳນົດໄວ້ໃນ ກົດໝາຍ, ລະບຽບການ ແລະ ຕາມການມອບໝາຍຂອງລັດຖະບານ.

**2. ຄະນະກຳມະການແກ້ໄຂບັນຫາຢາເສບຕິດ ແຂວງ, ນະຄອນຫຼວງ ມີສິດ ດັ່ງນີ້:**

2.1 ອອກຂໍ້ຕົກລົງ, ຄຳແນະນຳ, ແຈ້ງການ ແລະ ລະບຽບການ ທີ່ກ່ຽວຂ້ອງກັບວຽກງານກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

2.2 ຊີ້ນຳ, ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດວຽກງານຂອງຄະນະກຳມະການແກ້ໄຂບັນຫາຢາເສບຕິດ ເມືອງ, ເທດສະບານ ແລະ ນະຄອນ;

2.3 ແຕ່ງຕັ້ງກອງເລຂາຄະນະກຳມະການແກ້ໄຂບັນຫາຢາເສບຕິດ ແຂວງ, ນະຄອນຫຼວງ;

2.4 ຮຽກເຊີນພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມກອງປະຊຸມ ເພື່ອປຶກສາ ແລະ ຄົ້ນຄວ້າແກ້ໄຂບັນຫາກ່ຽວກັບວຽກງານກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ;

2.5 ຈັດກອງປະຊຸມສະໄໝສາມັນ, ວິສາມັນ, ສະຫຼຸບ ແລະ ຖອດຖອນບົດຮຽນກ່ຽວກັບວຽກງານກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ;

2.6 ທວງໃຫ້ບັນດາພະແນກ, ອົງການລັດທຽບເທົ່າພະແນກຂັ້ນແຂວງ, ອົງການຈັດຕັ້ງມະຫາຊົນ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ ແລະ ພາກສ່ວນທີ່ກ່ຽວຂ້ອງ ທີ່ຂຶ້ນກັບແຂວງ, ນະຄອນຫຼວງ ລາຍງານ ແລະ ສະໜອງຂໍ້ມູນ-ຂ່າວສານ ທີ່ກ່ຽວຂ້ອງກັບວຽກງານກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ;

2.7 ໂຄສະນາ, ສຶກສາອົບຮົມ ແລະ ເຜີຍແຜ່ເອກະສານຕ່າງໆ ທີ່ພົວພັນເຖິງວຽກງານກວດກາ, ຄວບຄຸມ, ສະກັດກັ້ນ, ຕ້ານຢາເສບຕິດ ແລະ ສານເຄມີຕົ້ນ ລວມທັງຈັດກິດຈະກຳວັນສາກົນ, ວັນແຫ່ງຊາດຕ້ານຢາເສບຕິດ ແລະ ກິດຈະກຳອື່ນ ຕາມການຕົກລົງເຫັນດີຂອງຂັ້ນເທິງ;

2.8 ຈັດຕັ້ງ ແລະ ເຂົ້າຮ່ວມ ກອງປະຊຸມ, ສຳມະນາ, ຝຶກອົບຮົມ, ທັດສະນະສຶກສາ ແລະ ເຂົ້າຮ່ວມເປັນຄະນະກຳມະການຕ່າງໆ ທີ່ພົວພັນເຖິງວຽກງານກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ຊຶ່ງອົງການຈັດຕັ້ງ ຫຼື ຂະແໜງການຕ່າງໆ ຈັດຂຶ້ນທັງພາຍໃນ ແລະ ຕ່າງປະເທດ ຕາມການຕົກລົງເຫັນດີຂອງຂັ້ນເທິງ;

2.9 ປະສານກັບພາກສ່ວນທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ເພື່ອເກັບກຳ, ວິໄຈຂໍ້ມູນ, ສ້າງ ແລະ ຄຸ້ມຄອງ ລະບົບຖານຂໍ້ມູນ-ຂ່າວສານດ້ານຕ່າງໆ ກ່ຽວກັບບັນຫາຢາເສບຕິດ ເພື່ອຮັບໃຊ້ໃຫ້ແກ່ການວາງແຜນ, ຕິດຕາມ, ກວດກາ ແລະ ປະເມີນຜົນເຂົ້າໃນວຽກງານກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ຢ່າງທັນການ;

2.10 ຄົ້ນຄວ້າ, ສ້າງ ຫ້ອງການປະສານງານຕາມຊາຍແດນ (BLOs), ບ້ານຄູ່ຂະໜານປອດຢາເສບຕິດ ແລະ ໂຄງການອື່ນ ທີ່ຕິດພັນກັບການແກ້ໄຂບັນຫາຢາເສບຕິດ ຕາມການຕົກລົງເຫັນດີ ຂອງຄະນະກຳມະການແກ້ໄຂບັນຫາຢາເສບຕິດ ລະດັບຊາດ;

2.11 ຄົ້ນຄວ້າ, ອອກຄຳແນະນຳ, ຊຸກຍູ້ ແລະ ນຳໃຊ້ກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ຂັ້ນແຂວງ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

2.12 ຂຶ້ນແຜນງົບປະມານ, ຄຸ້ມຄອງ ແລະ ນຳໃຊ້ ງົບປະມານປະຈຳປີ, ທຶນຊ່ວຍເຫຼືອ, ພາຫະນະ, ອຸປະກອນຮັບໃຊ້ຕ່າງໆ ທີ່ຢູ່ໃນການຄຸ້ມຄອງເຂົ້າໃນວຽກງານກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ຢ່າງມີປະສິດທິຜົນ;

2.13 ພົວພັນ, ຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ເພື່ອແລກປ່ຽນບົດຮຽນ, ວິຊາການ ແລະ ລະດົມການຊ່ວຍເຫຼືອດ້ານທຶນຮອນເຂົ້າໃນວຽກງານກວດກາ, ຄວບຄຸມ, ສະກັດກັ້ນ, ແລະ ຕ້ານຢາເສບຕິດ ຕາມການຕົກລົງເຫັນດີຂອງຂັ້ນເທິງ;

2.14 ນຳໃຊ້ສິດອື່ນ ຕາມທີ່ກຳນົດໄວ້ໃນ ກົດໝາຍ, ລະບຽບການ ແລະ ຕາມການມອບໝາຍຂອງຂັ້ນເທິງ.

**3. ຄະນະກຳມະການແກ້ໄຂບັນຫາຢາເສບຕິດ ເມືອງ, ເທດສະບານ, ນະຄອນ ມີສິດດັ່ງນີ້:**

3.1 ອອກຂໍ້ຕົກລົງ, ຄຳແນະນຳ, ແຈ້ງການ ແລະ ລະບຽບການ ທີ່ກ່ຽວຂ້ອງກັບວຽກງານກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

3.2 ແຕ່ງຕັ້ງກອງເລຂາຄະນະກຳມະການແກ້ໄຂບັນຫາຢາເສບຕິດ ເມືອງ, ເທດສະບານ, ນະຄອນ;

3.3 ຮຽກເຊີນພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມກອງປະຊຸມ ເພື່ອປຶກສາ ແລະ ຄົ້ນຄວ້າແກ້ໄຂບັນຫາກ່ຽວກັບວຽກງານກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ;

3.4 ຈັດກອງປະຊຸມສະໄໝສາມັນ, ວິສາມັນ, ສະຫຼຸບ ແລະ ຖອດຖອນບົດຮຽນກ່ຽວກັບວຽກງານກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ;

3.5 ທວງໃຫ້ບັນດາຫ້ອງການ, ອົງການລັດທຽບເທົ່າຫ້ອງການຂອງເມືອງ, ອົງການຈັດຕັ້ງມະຫາຊົນ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ ແລະ ພາກສ່ວນທີ່ກ່ຽວຂ້ອງ ທີ່ຂຶ້ນກັບເມືອງ, ເທດສະບານ, ນະ ຄອນ ລາຍງານ ແລະ ສະໜອງຂໍ້ມູນ-ຂ່າວສານ ທີ່ກ່ຽວຂ້ອງກັບວຽກງານກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ;

3.6 ໂຄສະນາ, ສຶກສາອົບຮົມ ແລະ ເຜີຍແຜ່ເອກະສານຕ່າງໆ ທີ່ພົວພັນເຖິງວຽກງານກວດກາ, ຄວບຄຸມ, ສະກັດກັ້ນ, ຕ້ານຢາເສບຕິດ ແລະ ສານເຄມີຕົ້ນ ລວມທັງເຂົ້າຮ່ວມກິດຈະກຳວັນສາກົນ, ວັນແຫ່ງຊາດ ຕ້ານຢາເສບຕິດ ແລະ ຈັດກິດຈະກຳອື່ນ ຕາມການຕົກລົງເຫັນດີຂອງຂັ້ນເທິງ;

3.7 ຈັດຕັ້ງ ແລະ ເຂົ້າຮ່ວມ ກອງປະຊຸມ, ສຳມະນາ, ຝຶກອົບຮົມ, ທັດສະນະສຶກສາ ແລະ ເຂົ້າຮ່ວມເປັນຄະນະກຳມະການຕ່າງໆ ທີ່ພົວພັນເຖິງວຽກງານກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ຊຶ່ງອົງການຈັດຕັ້ງ ຫຼື ຂະແໜງການຕ່າງໆ ຕາມການຕົກລົງເຫັນດີຂອງຂັ້ນເທິງ;

3.8 ປະສານກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອເກັບກຳ, ວິໄຈຂໍ້ມູນ, ສ້າງ ແລະ ຄຸ້ມຄອງ ລະບົບຖານຂໍ້ມູນ-ຂ່າວສານດ້ານຕ່າງໆ ກ່ຽວກັບບັນຫາຢາເສບຕິດ ເພື່ອຮັບໃຊ້ໃຫ້ແກ່ການວາງແຜນ, ຕິດຕາມ, ກວດກາ ແລະ ປະເມີນຜົນເຂົ້າໃນວຽກງານກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ຢ່າງທັນການ;

3.9 ຂຶ້ນແຜນງົບປະມານນຳແຂວງ, ນະຄອນຫຼວງ, ຄຸ້ມຄອງ ແລະ ນຳໃຊ້ ງົບປະມານປະຈຳປີ, ພາຫະນະ, ອຸປະກອນຮັບໃຊ້ຕ່າງໆ ທີ່ຢູ່ໃນການຄຸ້ມຄອງເຂົ້າໃນວຽກງານກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ຢ່າງມີປະສິດທິຜົນ;

3.10 ນຳໃຊ້ສິດອື່ນ ຕາມທີ່ກຳນົດໄວ້ໃນ ກົດໝາຍ, ລະບຽບການ ແລະ ຕາມການມອບໝາຍຂອງຂັ້ນເທິງ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

**ມາດຕາ 6 ໂຄງປະກອບກົງຈັກ**

**1. ຄະນະກຳມະການແກ້ໄຂບັນຫາຢາເສບຕິດ ລະດັບຊາດ**

ຄະນະກຳມະການແກ້ໄຂບັນຫາຢາເສບຕິດ ລະດັບຊາດ ມີກອງເລຂາເປັນກົງຈັກຊ່ວຍວຽກ ໂດຍຖືເອົາຫ້ອງການກວດກາ ແລະ ຄວບຄຸມຢາເສບຕິດ ຂອງກົມໃຫຍ່ຕຳຫຼວດ ກະຊວງປ້ອງກັນຄວາມສະຫງົບ ເປັນຫ້ອງການກອງເລຂາ.

**2. ຄະນະກຳມະການແກ້ໄຂບັນຫາຢາເສບຕິດ ແຂວງ, ນະຄອນຫຼວງ**

ຄະນະກຳມະການແກ້ໄຂບັນຫາຢາເສບຕິດ ແຂວງ, ນະຄອນຫຼວງ ມີກອງເລຂາເປັນກົງຈັກຊ່ວຍວຽກ ໂດຍຖືເອົາພະແນກກວດກາ ແລະ ຄວບຄຸມຢາເສບຕິດ ຂອງຫ້ອງຕຳຫຼວດ ກອງບັນຊາການ ປກສ ແຂວງ, ນະຄອນຫຼວງ ເປັນຫ້ອງການກອງເລຂາ.

**3. ຄະນະກຳມະການແກ້ໄຂບັນຫາຢາເສບຕິດ ເມືອງ, ເທດສະບານ, ນະຄອນ**

ຄະນະກຳມະການແກ້ໄຂບັນຫາຢາເສບຕິດ ເມືອງ, ເທດສະບານ, ນະຄອນ ມີກອງເລຂາເປັນກົງຈັກຊ່ວຍວຽກ ໂດຍຖືເອົາໜ່ວຍງານກວດກາ ແລະ ຄວບຄຸມຢາເສບຕິດ ຂອງພະແນກຕຳຫຼວດ ກອງບັນຊາການ ປກສ ເມືອງ, ເທດສະບານ, ນະຄອນ ເປັນຫ້ອງການກອງເລຂາ.

**ມາດຕາ 7 ໂຄງປະກອບບຸກຄະລາກອນ**

**1. ຄະນະກໍາມະການແກ້ໄຂບັນຫາຢາເສບຕິດ ລະດັບຊາດ ມີໂຄງປະກອບບຸກຄະລາກອນ ດັ່ງນີ້:**

1.1 ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ເປັນປະທານ;

1.2 ຮອງລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ເປັນຮອງປະທານ ແລະ ເປັນຜູ້ປະຈໍາການ;

1.3 ຮອງລັດຖະມົນຕີກະຊວງປ້ອງກັນປະເທດ ເປັນຮອງປະທານ;

1.4 ຮອງລັດຖະມົນຕີກະຊວງຍຸຕິທໍາ ເປັນຮອງປະທານ;

1.5 ຮອງລັດຖະມົນຕີກະຊວງການເງິນ ເປັນຮອງປະທານ;

1.6 ຮອງລັດຖະມົນຕີກະຊວງການຕ່າງປະເທດ ເປັນຄະນະ;

1.7 ຮອງລັດຖະມົນຕີກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ເປັນຄະນະ;

1.8 ຮອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ເປັນຄະນະ;

1.9 ຮອງລັດຖະມົນຕີກະຊວງສາທາລະນະສຸກ ເປັນຄະນະ;

1.10 ຮອງລັດຖະມົນຕີກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຄະນະ;

1.11 ຮອງລັດຖະມົນຕີກະຊວງກະສິກໍາ ແລະ ປ່າໄມ້ ເປັນຄະນະ;

1.12 ຮອງລັດຖະມົນຕີກະຊວງອຸດສາຫະກໍາ ແລະ ການຄ້າ ເປັນຄະນະ;

1.13 ຮອງລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່ ເປັນຄະນະ;

1.14 ຮອງລັດຖະມົນຕີກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ເປັນຄະນະ;

1.15 ຮອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ເປັນຄະນະ;

1.16 ຮອງລັດຖະມົນຕີກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນຄະນະ;

1.17 ຮອງລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຄະນະ;

1.18 ຮອງລັດຖະມົນຕີກະຊວງພາຍໃນ ເປັນຄະນະ;

1.19 ຮອງປະທານກໍາມາທິການ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາແຫ່ງຊາດ ເປັນຄະນະ;

1.20 ຮອງລັດຖະມົນຕີ, ຮອງຫົວໜ້າຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ເປັນຄະນະ;

1.21 ຮອງປະທານສານປະຊາຊົນສູງສຸດ ເປັນຄະນະ;

1.22 ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ເປັນຄະນະ;

1.23 ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ ເປັນຄະນະ;

1.24 ຮອງປະທານສູນກາງແນວລາວສ້າງຊາດ ເປັນຄະນະ;

1.25 ຮອງປະທານສະຫະພັນນັກຮົບເກົ່າລາວ ເປັນຄະນະ;

1.26 ຮອງປະທານສູນກາງສະຫະພັນກໍາມະບານລາວ ເປັນຄະນະ;

1.27 ຮອງເລຂາຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ເປັນຄະນະ;

1.28 ຮອງປະທານສູນກາງສະຫະພັນແມ່ຍິງລາວ ເປັນຄະນະ;

1.29 ຫົວໜ້າກົມໃຫຍ່ຕໍາຫຼວດ ກະຊວງປ້ອງກັນຄວາມສະຫງົບ ເປັນຄະນະ;

1.30 ຮອງຫົວໜ້າກົມໃຫຍ່ຕໍາຫຼວດ ກະຊວງປ້ອງກັນຄວາມສະຫງົບ ເປັນຄະນະ ແລະ ຫົວໜ້າກອງເລຂາ.

ຄະນະກໍາມະການແກ້ໄຂບັນຫາຢາເສບຕິດ ລະດັບຊາດ ແມ່ນນາຍົກລັດຖະມົນຕີ ເປັນຜູ້ແຕ່ງຕັ້ງຕາມການສະເໜີ ຂອງກະຊວງປ້ອງກັນຄວາມສະຫງົບ.

**2. ຄະນະກໍາມະການແກ້ໄຂບັນຫາຢາເສບຕິດ ແຂວງ, ນະຄອນຫຼວງ ມີໂຄງປະກອບບຸກຄະລາກອນ ດັ່ງນີ້:**

2.1 ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງ ເປັນປະທານ;

2.2 ຫົວໜ້າກອງບັນຊາການ ປກສ ແຂວງ, ນະຄອນຫຼວງເປັນຮອງປະທານ ແລະ ເປັນຜູ້ປະຈໍາການ;

2.3 ຮອງຫົວໜ້າກອງບັນຊາການທະຫານ ແຂວງ, ນະຄອນຫຼວງ ເປັນຮອງປະທານ;

2.4 ຮອງຫົວໜ້າພະແນກຍຸຕິທຳ ແຂວງ, ນະຄອນຫຼວງ ເປັນຮອງປະທານ;

2.5 ຮອງຫົວໜ້າພະແນກການເງິນ ແຂວງ, ນະຄອນຫຼວງ ເປັນຮອງປະທານ;

2.6 ຮອງຫົວໜ້າກອງບັນຊາການ ປກສ ແຂວງ, ນະຄອນຫຼວງ ເປັນຄະນະ;

2.7 ຮອງຫົວໜ້າພະແນກການຕ່າງປະເທດ ແຂວງ, ນະຄອນຫຼວງ ເປັນຄະນະ;

2.8 ຮອງຫົວໜ້າພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ ເປັນຄະນະ;

2.9 ຮອງຫົວໜ້າພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ ເປັນຄະນະ;

2.10 ຮອງຫົວໜ້າພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ ເປັນຄະນະ;

2.11 ຮອງຫົວໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມ ແຂວງ, ນະຄອນຫຼວງ ເປັນຄະນະ;

2.12 ຮອງຫົວໜ້າພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ເປັນຄະນະ;

2.13 ຮອງຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ເປັນຄະນະ;

2.14 ຮອງຫົວໜ້າພະແນກພະລັງງານ ແລະ ບໍ່ແຮ່ ແຂວງ, ນະຄອນຫຼວງ ເປັນຄະນະ;

2.15 ຮອງຫົວໜ້າພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ, ນະຄອນຫຼວງ ເປັນຄະນະ;

2.16 ຮອງຫົວໜ້າພະແນກແຜນການ ແລະ ການລົງທຶນ ແຂວງ, ນະຄອນຫຼວງ ເປັນຄະນະ;

2.17 ຮອງຫົວໜ້າພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງ, ນະຄອນຫຼວງ ເປັນຄະນະ;

2.18 ຮອງຫົວໜ້າພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ ເປັນຄະນະ;

2.19 ຮອງຫົວໜ້າພະແນກພາຍໃນ ແຂວງ, ນະຄອນຫຼວງ ເປັນຄະນະ;

2.20 ຮອງປະທານຄະນະກຳມະການ ຍຸຕິທຳ ແລະ ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາປະຊາຊົນ ແຂວງ, ນະຄອນຫຼວງ ເປັນຄະນະ;

2.21 ຮອງຫົວໜ້າຫ້ອງວ່າການແຂວງ, ນະຄອນຫຼວງ ເປັນຄະນະ;

2.22 ຮອງປະທານສານປະຊາຊົນ ແຂວງ, ນະຄອນຫຼວງ ເປັນຄະນະ;

2.23 ຮອງຫົວໜ້າອົງການໄອຍະການປະຊາຊົນ ແຂວງ, ນະຄອນຫຼວງ ເປັນຄະນະ;

2.24 ຮອງຫົວໜ້າສາຂາ ທຫລ ປະຈຳພາກ, ຮອງຫົວໜ້າຫ້ອງການ ຂອງຫ້ອງການທະນາຄານແຫ່ງ ສປປ ລາວ ເປັນຄະນະ;

2.25 ຮອງປະທານແນວລາວສ້າງຊາດ ແຂວງ, ນະຄອນຫຼວງ ເປັນຄະນະ;

2.26 ຮອງປະທານສະຫະພັນນັກຮົບເກົ່າ ແຂວງ, ນະຄອນຫຼວງ ເປັນຄະນະ;

2.27 ຮອງປະທານສະຫະພັນກຳມະບານລາວ ແຂວງ, ນະຄອນຫຼວງ ເປັນຄະນະ;

2.28 ຮອງເລຂາຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວ ແຂວງ, ນະຄອນຫຼວງ ເປັນຄະນະ;

2.29 ຮອງປະທານສະຫະພັນແມ່ຍິງລາວ ແຂວງ, ນະຄອນຫຼວງ ເປັນຄະນະ;

2.30 ຫົວໜ້າຫ້ອງຕຳຫຼວດ ກອງບັນຊາການ ປກສ ແຂວງ, ນະຄອນຫຼວງ ເປັນຄະນະ;

2.31 ຮອງຫົວໜ້າຫ້ອງຕຳຫຼວດ, ຜູ້ຊີ້ນຳວຽກງານກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ກອງບັນຊາການ ປກສ ແຂວງ, ນະຄອນຫຼວງ ເປັນຄະນະ ແລະ ຫົວໜ້າກອງເລຂາ.

ຄະນະກຳມະການແກ້ໄຂບັນຫາຢາເສບຕິດ ແຂວງ, ນະຄອນຫຼວງ ແມ່ນ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ເປັນຜູ້ແຕ່ງຕັ້ງ ຕາມການສະເໜີ ຂອງກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນຫຼວງ.

**3.ຄະນະກຳມະການແກ້ໄຂບັນຫາຢາເສບຕິດ ເມືອງ, ເທດສະບານ, ນະຄອນ ມີໂຄງປະກອບບຸກຄະລາກອນ ດັ່ງນີ້:**

3.1 ຮອງເຈົ້າເມືອງ, ຮອງຫົວໜ້າເທດສະບານ, ຮອງເຈົ້າຄອງນະຄອນ ເປັນປະທານ;

3.2 ຫົວໜ້າກອງບັນຊາການ ປກສ ເມືອງ, ເທດສະບານ, ນະຄອນ ເປັນຮອງປະທານ ແລະ ເປັນຜູ້ປະຈໍາການ;

3.3 ຮອງຫົວໜ້າກອງບັນຊາການທະຫານ ເມືອງ, ເທດສະບານ, ນະຄອນ ເປັນຮອງປະທານ;

3.4 ຮອງຫົວໜ້າຫ້ອງການຍຸຕິທໍາ ເມືອງ, ເທດສະບານ, ນະຄອນ ເປັນຮອງປະທານ;

3.5 ຮອງຫົວໜ້າຫ້ອງການການເງິນ ເມືອງ, ເທດສະບານ, ນະຄອນ ເປັນຮອງປະທານ;

3.6 ຮອງຫົວໜ້າກອງບັນຊາການ ປກສ ເມືອງ, ເທດສະບານ, ນະຄອນ ເປັນຄະນະ;

3.7 ຮອງຫົວໜ້າຫ້ອງການຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ເມືອງ, ເທດສະບານ, ນະຄອນ ເປັນຄະນະ;

3.8 ຮອງຫົວໜ້າຫ້ອງການສຶກສາທິການ ແລະ ກິລາ ເມືອງ, ເທດສະບານ, ນະຄອນ ເປັນຄະນະ;

3.9 ຮອງຫົວໜ້າຫ້ອງການສາທາລະນະສຸກ ເມືອງ, ເທດສະບານ, ນະຄອນ ເປັນຄະນະ;

3.10 ຮອງຫົວໜ້າຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ ເມືອງ, ເທດສະບານ, ນະຄອນ ເປັນຄະນະ;

3.11 ຮອງຫົວໜ້າຫ້ອງການກະສິກໍາ ແລະ ປ່າໄມ້ ເມືອງ, ເທດສະບານ, ນະຄອນ ເປັນຄະນະ;

3.12 ຮອງຫົວໜ້າຫ້ອງການອຸດສາຫະກໍາ ແລະ ການຄ້າ ເມືອງ, ເທດສະບານ, ນະຄອນ ເປັນຄະນະ;

3.13 ຮອງຫົວໜ້າຫ້ອງການພະລັງງານ ແລະ ບໍ່ແຮ່ ເມືອງ, ເທດສະບານ, ນະຄອນ ເປັນຄະນະ;

3.14 ຮອງຫົວໜ້າຫ້ອງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ເມືອງ, ເທດສະບານ, ນະຄອນ ເປັນຄະນະ;

3.15 ຮອງຫົວໜ້າຫ້ອງການແຜນການ ແລະ ການລົງທຶນ ເມືອງ, ເທດສະບານ, ນະຄອນ ເປັນຄະນະ;

3.16 ຮອງຫົວໜ້າຫ້ອງການເຕັກໂນໂລຊີ ແລະ ການສື່ສານ ເມືອງ, ເທດສະບານ, ນະຄອນ ເປັນຄະນະ;

3.17 ຮອງຫົວໜ້າຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ, ນະຄອນ ເປັນຄະນະ;

3.18 ຮອງຫົວໜ້າຫ້ອງການພາຍໃນ ເມືອງ, ເທດສະບານ, ນະຄອນ ເປັນຄະນະ;

3.19 ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈໍາເຂດເລືອກຕັ້ງ ເມືອງ, ເທດສະບານ, ນະຄອນ ເປັນຄະນະ;

3.20 ຮອງຫົວໜ້າຫ້ອງວ່າການ ເມືອງ, ເທດສະບານ, ນະຄອນ ເປັນຄະນະ;

3.21 ຮອງປະທານສານປະຊາຊົນເຂດ ເປັນຄະນະ;

3.22 ຮອງຫົວໜ້າອົງການໄອຍະການປະຊາຊົນ ເມືອງ, ເທດສະບານ, ນະຄອນ ເປັນຄະນະ;

3.23 ຮອງຫົວໜ້າພະແນກຂອງສາຂາ ທຫລ ປະຈໍາພາກ, ຮອງຫົວໜ້າພະແນກຂອງ ຫ້ອງການທະນາຄານແຫ່ງ ສປປ ລາວ ເປັນຄະນະ;

3.24 ຮອງປະທານແນວລາວສ້າງຊາດ ເມືອງ, ເທດສະບານ, ນະຄອນ ເປັນຄະນະ;

3.25 ຮອງປະທານສະຫະພັນນັກຮົບເກົ່າ ເມືອງ, ເທດສະບານ, ນະຄອນ ເປັນຄະນະ;

3.26 ຮອງປະທານສະຫະພັນກໍາມະບານລາວ ເມືອງ, ເທດສະບານ, ນະຄອນ ເປັນຄະນະ;

3.27 ຮອງເລຂາຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວ ເມືອງ, ເທດສະບານ, ນະຄອນ ເປັນຄະນະ;

3.28 ຮອງປະທານສະຫະພັນແມ່ຍິງລາວ ເມືອງ, ເທດສະບານ, ນະຄອນ ເປັນຄະນະ;

3.29 ຫົວໜ້າພະແນກຕໍາຫຼວດ ກອງບັນຊາການ ປກສ ເມືອງ, ເທດສະບານ, ນະຄອນ ເປັນຄະນະ;

3.30 ຮອງຫົວໜ້າພະແນກຕໍາຫຼວດ ກອງບັນຊາການ ປກສ ເມືອງ, ເທດສະບານ, ນະຄອນ ເປັນຄະນະ ແລະ ຫົວໜ້າກອງເລຂາ.

ຄະນະກໍາມະການແກ້ໄຂບັນຫາຢາເສບຕິດ ເມືອງ, ເທດສະບານ, ນະຄອນ ແມ່ນ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ເປັນຜູ້ແຕ່ງຕັ້ງຕາມການສະເໜີ ຂອງກອງບັນຊາການປ້ອງກັນຄວາມສະຫງົບ ເມືອງ, ເທດສະບານ, ນະຄອນ.

## ໝວດທີ 4
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

**ມາດຕາ 8 ຫຼັກການ**

**ຄະນະກຳມະການແກ້ໄຂບັນຫາຢາເສບຕິດ ເຄື່ອນໄຫວຕາມຫຼັກການ ດັ່ງນີ້:**

1. ປະຕິບັດຫຼັກການລວມສູນປະຊາທິປະໄຕ ແລະ ຕົກລົງເປັນໝູ່ຄະນະ ກ່ຽວກັບວຽກງານກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ;

2. ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບຢ່າງຈະແຈ້ງ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງ ຂອງສະມາຊິກຄະນະກຳມະການແກ້ໄຂບັນຫາຢາເສບຕິດ;

3. ທຸກການເຄື່ອນໄຫວ ຂອງຄະນະກຳມະການແກ້ໄຂບັນຫາຢາເສບຕິດ ແລະ ພະນັກງານ-ລັດຖະກອນ ຊ່ວຍວຽກແມ່ນອີງໃສ່ກົດໝາຍ, ລະບຽບການ ແລະ ຫຼັກການລວມຂອງລັດຖະບານ, ນຳເອົາແນວທາງນະໂຍບາຍຂອງພັກ ແລະ ຂອງລັດຖະບານ ມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ.

**ມາດຕາ 9 ແບບແຜນວິທີເຮັດວຽກ**

**ຄະນະກຳມະການແກ້ໄຂບັນຫາຢາເສບຕິດ ມີແບບແຜນວິທີເຮັດວຽກ ດັ່ງນີ້:**

1. ເຮັດວຽກມີແຜນງານ, ແຜນການ ແລະ ໂຄງການລະອຽດ, ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍໃນແຕ່ລະໄລຍະ;

2. ຄະນະກຳມະການແກ້ໄຂບັນຫາຢາເສບຕິດເຄື່ອນໄຫວວຽກງານແບບບໍ່ປະຈຳການ, ຖືເອົາລະບອບປະຊຸມ, ສ່ອງແສງ, ລາຍງານ ປະຈຳໄຕມາດ, 6 ເດືອນ, ປະຈຳປີ ຫຼື ກອງປະຊຸມວິຊາການ ເພື່ອເປັນການຊຸກຍູ້, ຕິດຕາມ, ກວດກາ, ສະຫຼຸບຖອດຖອນບົດຮຽນ, ຕີລາຄາຜົນສຳເລັດຂອງການນຳພາ-ຊີ້ນຳ ແລະ ວາງທິດທາງແຜນການເຄື່ອນໄຫວ ໃນແຕ່ລະໄລຍະ ພ້ອມທັງລາຍງານໃຫ້ລັດຖະບານ ເປັນປົກກະຕິ;

ໃນກໍລະນີຈຳເປັນ ຄະນະກຳມະການແກ້ໄຂບັນຫາຢາເສບຕິດ ສາມາດເປີດກອງປະຊຸມວິສາມັນຂອງຄະນະຂຶ້ນ ເພື່ອພິຈາລະນາບັນຫາຮີບດ່ວນ ການດຳເນີນກອງປະຊຸມຄົບຄະນະກຳມະການ ແຕ່ລະຄັ້ງ ຕ້ອງປະກອບດ້ວຍບຸກຄະລາກອນກາຍເຄິ່ງໜຶ່ງ ຂອງຄະນະກຳມະການແກ້ໄຂບັນຫາຢາເສບຕິດ ຈຶ່ງສາມາດເປີດກອງປະຊຸມໄດ້.

3. ປະສານສົມທົບຢ່າງແໜ້ນແຟ້ນກັບອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງແນໃສ່ໜູນໃຊ້ກຳລັງແຮງຂອງທຸກພາກສ່ວນ ເຂົ້າໃນວຽກງານກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 10 ງົບປະມານ, ຕາປະທັບ ແລະ ເຄື່ອງໝາຍ**

ຄະນະກຳມະການແກ້ໄຂບັນຫາຢາເສບຕິດ ນຳໃຊ້ງົບປະມານຂອງລັດ, ກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ, ການຊ່ວຍເຫຼືອ, ການປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ເຂົ້າໃນການເຄື່ອນໄຫວວຽກງານກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ.

ຄະນະກຳມະການແກ້ໄຂບັນຫາຢາເສບຕິດ ມີຕາປະທັບ ແລະ ເຄື່ອງໝາຍຂອງຕົນ ເພື່ອນຳໃຊ້ເຂົ້າໃນວຽກງານທາງລັດຖະການ ໂດຍແມ່ນຄະນະກຳມະການແກ້ໄຂບັນຫາຢາເສບຕິດ ລະດັບຊາດ ເປັນຜູ້ກຳນົດ.

**ມາດຕາ 11 ການຜັນຂະຫຍາຍ**

1. ມອບໃຫ້ຄະນະກໍາມະການແກ້ໄຂບັນຫາຢາເສບຕິດ ໂດຍແມ່ນ ປະທານຄະນະກໍາມະການແກ້ໄຂບັນຫາຢາເສບຕິດລະດັບຊາດ ເປັນເຈົ້າການ ໃນການຄົ້ນຄວ້າ ອອກຂໍ້ຕົກລົງ, ຄໍາແນະນໍາ, ແຈ້ງການ ແລະ ລະບຽບການ ເພື່ອຈັດຕັ້ງຜັນຂະຫຍາຍ ດໍາລັດສະບັບນີ້ ໃຫ້ລະອຽດ, ຈະແຈ້ງ, ຮັດກຸມ ແລະ ເໝາະສົມ ເພື່ອຮັບໃຊ້ເຂົ້າໃນການປະຕິບັດວຽກງານ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ;

2. ມອບໃຫ້ປະທານຄະນະກໍາມະການແກ້ໄຂບັນຫາຢາເສບຕິດ ແຕ່ລະຂັ້ນ ເປັນຜູ້ອອກຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກອງເລຂາຢູ່ຂັ້ນຂອງຕົນ ໃຫ້ລະອຽດ, ຈະແຈ້ງ, ຮັດກຸມ ແລະ ເໝາະສົມ ເພື່ອຮັບໃຊ້ໃຫ້ແກ່ການເຄື່ອນໄຫວວຽກງານໃຫ້ໄດ້ຮັບຜົນດີ;

3. ມອບໃຫ້ປະທານຄະນະກໍາມະການແກ້ໄຂບັນຫາຢາເສບຕິດ ລະດັບຊາດ ຊີ້ນໍາໃນການແບ່ງວຽກ-ແບ່ງຄວາມຮັບຜິດຊອບພາຍໃນຄະນະໃຫ້ລະອຽດ. ພ້ອມທັງຊີ້ນໍາການເຄື່ອນໄຫວຂອງຄະນະກໍາມະການແກ້ໄຂບັນຫາຢາເສບຕິດ ແຂວງ ແລະ ນະຄອນຫຼວງ ຕາມໜ້າທີ່ ແລະ ຂອບເຂດສິດ ທີ່ໄດ້ກໍານົດໄວ້ ໃນມາດຕາ 4 ແລະ ມາດຕາ 5 ຂອງດໍາລັດສະບັບນີ້ ໃຫ້ໄດ້ຮັບຜົນດີ;

4. ມອບໝາຍໃຫ້ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ແຕ່ງຕັ້ງຜູ້ຕາງໜ້າຂອງຕົນ ທີ່ຮັບຜິດຊອບວຽກງານດັ່ງກ່າວ ເພື່ອປະກອບເຂົ້າເປັນຄະນະ ທີ່ໄດ້ກໍານົດໄວ້ ໃນມາດຕາ 7 ຂອງດໍາລັດສະບັບນີ້ ແລ້ວແຈ້ງໃຫ້ ກະຊວງປ້ອງກັນຄວາມສະຫງົບ ເພື່ອຊາບ.

**ມາດຕາ 12 ການຈັດຕັ້ງປະຕິບັດ**

ຄະນະກໍາມະການແກ້ໄຂບັນຫາຢາເສບຕິດ, ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການຈັດຕັ້ງມະຫາຊົນ, ສູນກາງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ແຂວງ, ນະຄອນຫຼວງ, ເມືອງ, ເທດສະບານ, ນະຄອນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ດໍາລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 13 ຜົນສັກສິດ**

ດໍາລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ**

ທອງໄຊ ສີພັນດອນ